ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມປ່າໄມ້

ເລກທີ 0962/ກປມ

ນະຄອນຫຼວງວຽງຈັນ, ວັນທີ 09 APR 2010

# ບົດແນະນຳ

## ວ່າດ້ວຍ ການຄຸ້ມຄອງການເຄື່ອນຍ້າຍໄມ້ທ່ອນ ແຕ່ຈຸດຕັດປ່ຳທາສະໜາມ II

- ອີງຕາມມາດຕາ 60 ຂອງກົດໝາຍປ່າໄມ້ ສະບັບປັບປຸງ ເລກທີ 13/ສພຊ, ລົງວັນທີ 9/11/2005 ວ່າດ້ວຍສິດ ແລະ ໜ້າທີ່ຂອງກະຊວງກະສິກຳ ແລະ ປ່າໄມ້.
- ອີງຕາມດຳລັດ ສະບັບເລກທີ 59/ນຍ, ລົງວັນທີ 22/05/2002, ວ່າດ້ວຍການຄຸ້ມຄອງປ່າຜະລິດ ແບບຍືນນານ.
- ອີງຕາມລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 0221/ກປ, ລົງວັນທີ 13/10/2000 ວ່າດ້ວຍການຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້.

### ຫົວໜ້າກົມປ່າໄມ້ ອອກບົດແນະນຳ:

## I. ຈຸດປະສົງ

1. ເພື່ອແນະນຳຂັ້ນຕອນການໝາຍ, ການບັນທຶກ, ການເຄື່ອນຍ້າຍ ແລະການຂຶ້ນບັນຊີ ໄມ້ທ່ອນ ທີ່ຂຸດຄົ້ນອອກຈາກປ່າຜະລິດ.
2. ເພື່ອເປັນເຄື່ອງມືໃນການຕິດຕາມກວດກາການຂຸດຄົ້ນໄມ້ ແລະ ການເຄື່ອນຍ້າຍໄມ້ທ່ອນໃນເຂດປ່າຜະລິດ.
3. ເພື່ອຕອບສະໜອງທາງດ້ານເອກະສານຢັ້ງຢືນກ່ຽວກັບແຫຼ່ງທີ່ມາຂອງໄມ້ທ່ອນ.

## II ເນື້ອໃນ ແລະຂອບເຂດການນຳໃຊ້

ເນື້ອໃນຂອງບົດແນະນຳສະບັບນີ້ ປະກອບດ້ວຍ: ຂັ້ນຕອນ ແລະວິທີການໝາຍ, ການບັນທຶກ, ການເຄື່ອນຍ້າຍ, ການຂຶ້ນບັນຊີໄມ້ທ່ອນ ແລະການເກັບຮັກສາເອກະສານຕ່າງໆ ທີ່ກ່ຽວຂ້ອງ.

ບົດແນະນຳ ສະບັບນີ້ ສາມາດນຳໃຊ້ໄດ້ສະເພາະເຂດປ່າຜະລິດ ທີ່ໄດ້ຜ່ານການຈັດສັນ ໃນຂອບເຂດທົ່ວປະເທດ.

## III ຂັ້ນຕອນ

ຂັ້ນຕອນການຄຸ້ມຄອງການເຄື່ອນຍ້າຍໄມ້ທ່ອນ ແຕ່ຈຸດຕັດປ່ຳຫາສະໜາມ II ມີດັ່ງນີ້:

1. ການຕັດປ່ຳຕົ້ນໄມ້ທີ່ຖືກຄັດເລືອກ
2. ການບັ່ນທ່ອນ ແລະການໝາຍທ່ອນໄມ້
3. ການນຳສົ່ງໄມ້ທ່ອນຫາສະໜາມ II
4. ການຂຶ້ນບັນຊີໄມ້ສະໜາມ II
5. ການເກັບຮັກສາເອກະສານຕ່າງໆ ທີ່ກ່ຽວຂ້ອງ

## IV ວິທີການ

### 4.1 ການຕັດປ່ຳຕົ້ນໄມ້ ທີ່ຖືກຄັດເລືອກ

ກ່ອນການຕັດປ່ຳ ທີມງານຄຸ້ມຄອງການຂຸດຄົ້ນ ຕ້ອງກວດຄືນຕົ້ນໄມ້ທີ່ຖືກຄັດເລືອກຕັດເຊັ່ນ: ຊະນິດໄມ້, ເບີແລວແມ່, ເບີແລວປີກ ແລະເບີຕົ້ນໃສ່ກັບແບບຟອມບັນຊີໄມ້ຢືນຕົ້ນທີ່ໄດ້ຄັດເລືອກ (ແບບຟອມທີ 1) ພ້ອມທັງກວດກາເຕັກນິກການໝາຍຕົ້ນຕັກທີ່ໄດ້ລະບຸໄວ້ໃນຂໍ້ທີ VI ຂອງບົດແນະນຳ ຂອງກົມປ່າໄມ້ ສະບັບເລກທີ 2155/ປມ, ລົງວັນທີ 6 ພະຈິກ 2006 ວ່າດ້ວຍການສຳຫຼວດປ່າໄມ້ແບບມີສ່ວນຮ່ວມ (ເບິ່ງຮູບທີ 1).

ການຕັດປ່ຳ ຕ້ອງໃຫ້ຕັດແຕ່ຕົ້ນໄມ້ທີ່ໝາຍໃຫ້ຕັດເທົ່ານັ້ນ ແລະຕ້ອງປະຕິບັດໃຫ້ຖືກຕາມເຕັກນິກການຕັດທີ່ໄດ້ລະບຸໄວ້ໃນຂໍ້ທີ X (X.1) ຂອງບົດແນະນຳ ຂອງກົມປ່າໄມ້ ສະບັບເລກທີ 2157/ປມ, ລົງວັນທີ 06 ພະຈິກ 2006, ວ່າດ້ວຍຫຼັກການຂຸດຄົ້ນໄມ້ ໃນເຂດປ່າຜະລິດ. ໄມ້ແຕ່ລະຕົ້ນທີ່ຖືກຕັດ ຕ້ອງໄດ້ໝາຍວັນທີຕັດປ່ຳເຂົ້າໃນແບບຟອມທີ 1. ໃນກໍລະນີຕົ້ນໃດບໍ່ໄດ້ຕັດ ຕ້ອງອະທິບາຍເຫດຜົນຢ່າງຈະແຈ້ງ.




ຮູບທີ 1: ການໝາຍຕົ້ນຕັດ

### 4.2 ການບັ່ນທ່ອນ ແລະ ການໝາຍທ່ອນໄມ້

(1) ການບັ່ນທ່ອນແມ່ນໃຫ້ປະຕິບັດຕາມ ບົດແນະນຳຂອງກົມປ່າໄມ້ ສະບັບເລກທີ 2157/ປມ ພ້ອມນີ້ໄມ້ແຕ່ລະທ່ອນ ຕ້ອງແຕ້ມເຄື່ອງໝາຍໃສ່ ໜ້າທ່ອນໄມ້ໃຫ້ຈະແຈ້ງ ດ້ວຍສໍແຕ້ມໜ້າໄມ້ ເຊັ່ນ: ເບີຕຸ້ມຂຸດຄົ້ນ, ເບີແລວແມ່, ເບີແລວປີກ, ເບີຕົ້ນ ແລະ ເບີທ່ອນ (ຮູບທີ 2). ໃນກໍລະນີ ຕົ້ນໄມ້ທີ່ຖືກຕັດປຳ້ຫາກມີ ເກີນ 1 ທ່ອນ, ເຊັ່ນ: 1, 2...n ທ່ອນ; ການໝາຍຕ້ອງປະຕິບັດດັ່ງນີ້: (01 1 02 03 1), (01 1 02 03 2), ແລະ (01 1 02 03...n)




ຮູບທີ 2: ການໝາຍໜ້າໄມ້ຢູ່ຈຸດຕັດປຳ້/ສະໜາມ 1

(2) ໄມ້ທ່ອນທີ່ຂຸດຄົ້ນຈາກເຂດຢັ້ງຢືນ, ນອກຈາກໝາຍເລກລະຫັດດັ່ງຂ້າງເທິງແລ້ວ ຕ້ອງໝາຍສັນຍາລັກການຢັ້ງຢືນປ່າໄມ້ (FSC) ຕື່ມອີກດ້ວຍສໍແຕ້ມໜ້າໄມ້ເພື່ອສະດວກໃນການກວດກາແລະແຍກໄມ້ທ່ອນຢູ່ສະໜາມ II.

(3) ຈຳນວນທ່ອນໄມ້ທີ່ບັ່ນທ່ອນຈາກຕົ້ນໄມ້ທີ່ຖືກຕັດຕ້ອງໄດ້ບັນທຶກເຂົ້າໃນ ແບບຟອມທີ 1.

4.3 ການນຳສົ່ງໄມ້ທ່ອນຫາສະໜາມ II

ໄມ້ແຕ່ລະທ່ອນກ່ອນຈະນຳສົ່ງອອກຈາກຈຸດຕັດປ່າ/ສະໜາມ I ຕ້ອງມີແບບຟອມໃບນຳສົ່ງ(ແບບຟອມ 2). ໃບນຳສົ່ງດັ່ງກ່າວຕ້ອງໄດ້ສຳເນົາອອກເປັນ 3 ສະບັບເພື່ອໃຫ້ຜູ້ຕິດຕາມການຂຸດຄົ້ນ, ຜູ້ຂັບລົດບັນທຸກ ແລະ ພະນັກງານຜູ້ຮັບຜິດຊອບຄຸ້ມຄອງໄມ້ສະໜາມ II ເກັບຮັກສາໄວ້.

4. 4 ການຂຶ້ນບັນຊີໄມ້ເຂົ້າສະໜາມ II

ໄມ້ທ່ອນທີ່ຂົນສົ່ງອອກຈາກຈຸດຕັດປ່າ/ສະໜາມ I ມາທ້ອນໂຮມໄວ້ສະໜາມ II ຕ້ອງໄດ້ຈັດວາງເປັນລຳດັບ ແລະ ເປັນລະບຽບເພື່ອສະດວກໃນການຄຸ້ມຄອງຂອງພະນັກງານປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ທີ VII ຂອງບົດແນະນຳຂອງກົມປ່າໄມ້ ສະບັບເລກທີ 2157/ປມ. ໃນການຂຶ້ນບັນຊີໄມ້ເຂົ້າສະໜາມ II ໃຫ້ປະຕິບັດດັ່ງນີ້:

(1) ແຍກໄມ້ ພ້ອມທັງບັນຊີໄມ້ ລະຫວ່າງໄມ້ທີ່ຂຸດຄົ້ນອອກຈາກເຂດປ່າຜະລິດທີ່ໄດ້ຮັບການຢັ້ງຢືນ ແລະ ເຂດປ່າຜະລິດທີ່ບໍ່ທັນໄດ້ຮັບການຢັ້ງຢືນ.

(2) ການໝາຍລະຫັດໜ້າໄມ້ທ່ອນຢູ່ສະໜາມ II, ສຳຫລັບແຫລ່ງທີ່ມາຂອງໄມ້ຈະມີເລກລະຫັດຢູ່ສອງກຸ່ມຕາມເສັ້ນ ທາງນອນ.

- ກຸ່ມທີ່ຢູ່ເທິງ ເສັ້ນ ປະກອບມີ 4 ເລກລະຫັດ (7 ຕົວເລກ):
  - ເບີປ່າຜະລິດ ມີ 2 ຕົວເລກ,
  - ເບີເຂດ ຄຸ້ມຄອງ ມີ 1ຕົວ ເລກ,
  - ເບີເຂດ ຄຸ້ມຄອງຍ່ອຍ ມີ 2 ຕົວເລກ
  - ເບີຄຸ້ມຂຸດຄົ້ນ ມີ 2 ຕົວເລກ.
- ກຸ່ມ ທີ່ຢູ່ດ້ານລຸ່ມ ມີ 4 ລະຫັດ (6 ຕົວເລກ):
  - ເບີແລວແມ່ ມີ 1 ຕົວເລກ,
  - ເບີແລວປີກ ມີ 2 ຕົວເລກ,
  - ເບີຕົ້ນ ມີ 2 ຕົວເລກ
  - ເບີທ່ອນ ມີ 1 ຕົວເລກ.

ນອກຈາກລະຫັດຂ້າງເທິງ; ໜ້າໄມ້ແຕ່ລະທ່ອນຕ້ອງໄດ້ແຕ້ມເລກລຳດັບທ່ອນ, ໜ້າຕ້າງ ແລະ ລວງຍາວເພີ່ມຕື່ມ. ການໝາຍແມ່ນບໍ່ໃຫ້ທັບກັບເລກລະຫັດແຫລ່ງທີ່ມາຂອງໄມ້ທ່ອນ (ຮູບແຕ້ມ 3). ສຳຫລັບ ການໝາຍລະຫັດໜ້າໄມ້ທ່ອນໃຫ້ໃຊ້ສີນ້ຳມັນ.

(3) ໄມ້ທີ່ຂຸດຄົ້ນອອກຈາກເຂດປ່າຜະລິດທີ່ໄດ້ຮັບການຢັ້ງຢືນຕ້ອງໝາຍ " FSC " ໃຫ້ແຈ້ງ ໂດຍໃຊ້ສີນ້ຳມັນຂຽນຕົວເລກເປັນສີຂາວ ແລະ ພື້ນເປັນສີຟ້າ.

(4) ກົມປ່າໄມ້ເປັນຜູ້ກຳນົດເລກລະຫັດຂອງ ເຂດປ່າຜະລິດ, ເຂດຄຸ້ມຄອງ ແລະ ເຂດຄຸ້ມຄອງຍ່ອຍໃນຂອບເຂດທົ່ວປະເທດ.




ຮູບທີ 3: ການໝາຍເລກລະຫັດໄມ້ທ່ອນ

(5) ບັນທຶກໄມ້ທ່ອນໃສ່ໃນແບບຟອມບັນຊີໄມ້ທ່ອນເຂົ້າສະໜາມ II (ແບບຟອມທີ 3) ໃນແຕ່ລະຄັ້ງພາຍຫລັງ ໝາຍໜ້າໄມ້ສຳເລັດ.

### 4. 6 ການຂຶ້ນບັນຊີໄມ້ຢູ່ສະໜາມ II

ການວັດແທກ ແລະຈັດຊັ້ນຄຸນນະພາບໄມ້ລະອຽດໃຫ້ອີງຕາມຂໍ້ກຳນົດຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0116/ກປ.07, ວັນທີ 17/05/2007 ວ່າດ້ວຍລະບຽບການວັດແທກໄມ້ທ່ອນ, ຕໍ່ໄມ້, ປູດໄມ້ ແລະການຈັດຊັ້ນຄຸນນະພາບໄມ້ທ່ອນ.ຈາກຂໍ້ມູນທີ່ໄດ້ບັນທຶກໃນໃບວັດແທກ ແລະຈັດຊັ້ນຄຸນນະພາບໄມ້ທ່ອນຕ້ອງສັງລວມເຂົ້າໃນແບບຟອມບັນຊີໄມ້ສະໜາມ II (ແບບຟອມທີ 4).

## V. ການເກັບຮັກສາເອກະສານ

### 5.1 ເອກະສານກ່ຽວກັບການຕິດຕາມໄມ້ທ່ອນມີ:

- ແຜນຈັດສັນເຂດປ່າຜະລິດ, ເຂດຄຸ້ມຄອງ ແລະ ເຂດຄຸ້ມຄອງຍ່ອຍ
- ຂໍ້ມູນສຳຫລວດກ່ອນການຂຸດຄົ້ນ
- ແຜນຂຸດຄົ້ນປະຈຳປີ ລວມທັງແບບຟອມທີ 1 ແລະ ແຜນທີ່ຈຸດຢືນຂອງຕົ້ນໄມ້ທີ່ຖືກຄັດເລືອກ
- ໃບອະນຸຍາດຂຸດຄົ້ນ
- ສັນຍາຂຸດຄົ້ນ

- ບັນຊີຕິດຕາມການຂຸດຄົ້ນ (ແບບຟອມທີ1)
- ໃບນຳສົ່ງໄມ້ທ່ອນຫາສະໜາມ II (ແບບຟອມທີ 2)
- ບັນຊີໄມ້ທ່ອນເຂົ້າສະໜາມ II (ແບບຟອມທີ 3)
- ບັນຊີໄມ້ສະໜາມ II (ແບບຟອມ 4)
- ເອກະສານການປະມູນ ແລະການຂາຍໄມ້.
- ສັນຍາຂາຍ
- ບົດສະຫລຸບການຂາຍ
- ໃບອະນຸຍາດຂົນສົ່ງ
- ໃບນຳສົ່ງສິນຄ້າ ຫາຜູ້ຊື້ ແລະໃບຮັບເງິນ
- ບົດລາຍງານການຈັດຕັ້ງປະຕິບັດແຜນການຂຸດຄົ້ນ
- ບົດ ບັນທຶກຕ່າງໆ ຂອງການກວດສອບພາຍໃນ, ການບໍ່ເຮັດຕາມ ແລະການແກ້ໄຂຕ່າງໆ ທີ່ເກີດຂຶ້ນ.

5. 2 ການເກັບຮັກສາເອກກະສານ

ເອກກະສານທີ່ກ່ຽວຂ້ອງທີ່ລະບຸຢູ່ຂ້າງເທິງນີ້ ເປັນເອກກະສານຢັ້ງຢືນກ່ຽວກັບການຂຸດຄົ້ນໄມ້ຕາມ ລະບົບຈັດສັນປ່າຜະລິດແບບຍືນນານທັງເປັນເອກກະສານຮອງຮັບການກວດກາຂອງອົງການກວດກາທັງພາຍໃນ ແລະຕ່າງປະເທດ. ສະນັ້ນ, ການເກັບຮັກສາເອກກະສານຕ້ອງມີລະບົບດັ່ງນີ້:

| ເອກະສານຕ່າງໆ | ກົມປ່າໄມ້ | ພະແນກອຸດສາຫະກຳ ການຄ້າແຂວງ | ພະແນກການເງິນແຂວງ | ຂະແໜງປ່າໄມ້ ແຂວງ | ໜ່ວຍຄຸ້ມຄອງປ່າຜະລິດ | ການຈັດຕັ້ງປ່າໄມ້ບ້ານ |
|---|---|---|---|---|---|---|
| ແຜນຈັດສັນ | ສຳເນົາ | | | ສະບັບເດີມ | ສຳເນົາ | |
| ຂໍ້ມູນສຳຫລວດກ່ອນການຂຸດຄົ້ນ | | ສຳເນົາ | | ສະບັບເດີມ | ສຳເນົາ | |
| ແຜນຂຸດຄົ້ນປະຈຳປີ | | ສຳເນົາ | | ສະບັບເດີມ | ສຳເນົາ | ສຳເນົາ |
| ໃບອະນຸຍາດຂຸດຄົ້ນ | | | | ສະບັບເດີມ | ສຳເນົາ | ສຳເນົາ |
| ສັນຍາຂຸດຄົ້ນ | | | | ສະບັບເດີມ | ສຳເນົາ | ສຳເນົາ |
| ບັນຊີຕິດຕາມການຂຸດຄົ້ນ ແລະ ແຜນທີ່ຈຸດຢືນ | | | | ສະບັບເດີມ | ສຳເນົາ | ສຳເນົາ |
| ໃບນຳສົ່ງໄມ້ຫາສະໜາມ II (ຟອມ 2) | | | | | ສຳເນົາ | ສຳເນົາ |
| ບັນຊີໄມ້ທ່ອນເຂົ້າສະໜາມ II (ຟອມ 3) | | | | | ສຳເນົາ | ສຳເນົາ |
| ບັນຊີໄມ້ທ່ອນສະໜາມ II (ຟອມ 4) | | ສຳເນົາ | | ສະບັບເດີມ | ສຳເນົາ | (ບົດສະຫລຸບຫຍໍ້) |
| ເອກະສານການປະມູນ | ສຳເນົາ | ສະບັບເດີມ | | ສຳເນົາ | ສຳເນົາ | ສຳເນົາ |

| | | | | | | |
|---|---|---|---|---|---|---|
| ແລະການຂາຍໄມ້. | | | | | | |
| ສັນຍາຂາຍ | | ສະບັບເດີມ | ທະບຽນການຂາຍ | ສຳເນົາ | ສຳເນົາ | |
| ສະຫລຸບການຂາຍ | ສຳເນົາ | ສະບັບເດີມ | | ສຳເນົາ | | |
| ໃບນຳສົ່ງສິນຄ້າ ຫາຜູ້ຊື້ ແລະໃບຮັບເງິນ | | ສະບັບເດີມ | ສຳເນົາ | ສຳເນົາ | | |
| ໃບອະນຸຍາດຂົນສົ່ງ | | ສະບັບເດີມ | | ສຳເນົາ | | |
| ບົດລາຍງານການປະຕິບັດແຜນການຂຸດຄົ້ນ | ສຳເນົາ | | | ສະບັບເດີມ | ສຳເນົາ | |
| ບົດບັນທຶກຕ່າງໆຂອງການກວດສອບພາຍໃນ, ການບໍ່ເຮັດຕາມ ແລະການແກ້ໄຂຕ່າງໆ ທີ່ເກີດຂຶ້ນ | ສະບັບເດີມ | ສຳເນົາ | | ສຳເນົາ | ສຳເນົາ | |

- ເອກະສານທັງໝົດທີ່ໄດ້ມອບໃຫ້ ໂດຍອີງການຈັດຕັ້ງທີ່ຢູ່ພາຍໃຕ້ ກະຊວງກະສິກຳ ແລະປ່າໄມ້ ແລະເອກະສານການຂາຍໄມ້ທີ່ໄດ້ຢັ້ງຢືນ (FSC ລ້ວນແລະ ໄມ້ທີ່ໄດ້ຄວບຄຸມ ຂອງ FSC) (ຕົວຢ່າງ: ບົດສະຫລຸບການຂຸດຄົ້ນ, ບົດສະຫລຸບການຂາຍ, ໃບນຳສົ່ງສິນຄ້າ, ໃບອະນຸຍາດຂົນສົ່ງ) ຕ້ອງຮັກສາໄວ້ ຢ່າງນ້ອຍ 5 ປີ. ຂະແໜງປ່າໄມ້ແຂວງຕ້ອງສ້າງລະບົບເກັບຮັກສາເອກະສານໃຫ້ສົມບູນແບບ.

## VI ການຕິດຕາມກວດກາ

ການກວດກາຂອງຂະແໜງປ່າໄມ້ແຂວງປະກອບດ້ວຍການກວດກາທາງດ້ານເອກກະສານ ແລະການ ກວດກາພາກສະໜາມ

### 6.1 ການກວດກາທາງດ້ານເອກກະສານ

ການກວດກາທາງດ້ານເອກກະສານແມ່ນໃຫ້ກວດກາຄວາມຄົບຖ້ວນຂອງບັນດາເອກກະສານຕ່າງໆທີ່ໄດ້ລະບຸໄວ້ໃນ ຂໍ້ 5.2

### 6. 2 ການກວດກາພາກສະໜາມ

- ກວດກາເບິ່ງເຂດຂຸດຄົ້ນທີ່ໄດ້ອະນຸມັດຕາມແຜນການຂຸດຄົ້ນ.
- ກວດກາລະຫັດໄມ້ທ່ອນຕົວຈິງກັບຂໍ້ມູນໃນແບບຟອມບັນທຶກ. ໃນກໍລະນີບໍ່ຈະແຈ້ງຕ້ອງກວດກາແຫ່ລ່ງທີ່ມາ.
- ກວດກາການວັດແທກ, ການຈັດຊັ້ນຄຸນນະພາບໄມ້ ແລະບັນຊີໄມ້ສະໜາມ II. ສຳຫລັບໄມ້ທີ່ໄດ້ຂຸດຄົ້ນຈາກເຂດຢັ້ງຢືນປ່າໄມ້ຕ້ອງກວດກາເຄື່ອງໝາຍ "FSC"

VII ການຈັດຕັ້ງປະຕິບັດ

ມອບໃຫ້ຂະແໜງປ່າໄມ້ຊີ້ນຳໜ່ວຍງານປ່າໄມ້ເມືອງ ແລະ ການຈັດຕັ້ງກຸ່ມປ່າໄມ້ບ້ານໃນການຈັດຕັ້ງປະຕິບັດ ບົດແນະນຳສະບັບນີ້ຢ່າງເຂັ້ມງວດ

VIII. ຜົນສັກສິດ

ບົດແນະນຳສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ຮ. ຫົວໜ້າກົມ ປ່າໄມ້

ຄຳໄພ ມະນີວົງ

## ແບບຟອມ 1: ບັນຊີໄມ້ຢືນຕົ້ນທີ່ໄດ້ຄັດເລືອກ
Selected trees list

ຄຸ້ມຄອງ (ການຕັດປ່
Control (felling)

| | | | | | | |
|---|---|---|---|---|---|---|
| ແຂວງ PROVINCE | | ເຂດຄຸ້ມຄອງ FMA | | ຄຸ້ມຂຸດຄົ້ນ Compartment no: | | ເນື້ອທີ່ Area(Ha) |
| ເຂດປ່າຜະລິດ PFA | | ເຂດຄຸ້ມຄອງຍ່ອຍ SUB FMA | | ດອນທີ Block(Unit) No | | ໃບທີ: |

| ລ.ດ S.N | ຄຸ້ມ Compartment | ແລວແມ່ Baseline | ແລວປີກ Stripline | ເບີຕົ້ນ Tree no. | ຊະນິດພັນໄມ້ Species | ໜ້າຕ້າງພຽງເອິກ DBH (cm) | ລວງສູງກາຄ້າ Bole length (m) | ບໍລິມາດ Vol. (m3) | ຄຸນະພາບ Quality | ໝາຍເຫດ Remarks | ຮອບຕັດຟັນ Year (coupe) | ວັນທີ Date | ເບີໄມ້ທ່ອນ Log Nos. |
|---|---|---|---|---|---|---|---|---|---|---|---|---|---|
| | | | | | | | | | | | | | |
| | | | | | | | | | | | | | |
| | | | | | | | | | | | | | |
| | | | | | | | | | | | | | |
| | | | | | | | | | | | | | |
| | | | | | | | | | | | | | |

ສຳເນົາ ບັນຊີໄມ້ຢືນຕົ້ນທີ່ໄດ້ຮັບຮອງແລ້ວ

ໄມ້

ວັນທີ:

ຫ້ອງການສົ່ງເສີມກະສິກຳປ່າໄມ້ເມືອງ

ວັນທີ:

ໜ່ວຍງານສຳຫລວດ

ໃນໄລຍະຄຸ້ມຄອງການຂຸດຄົ້ນຕົ້ນໃສ່ສ່ວນນີ້

## ແບບຟອມ 2: ໃບນຳສົ່ງໄມ້ທ່ອນຈາກຈຸດຕັດປ່າ/ສະໜາມ I ຫາ ສະໜາມ II

### ໃບນຳສົ່ງ/Transportation slip

| | | | |
|---|---|---|---|
| ວັນທີ<br>Data | | ໃບທີ<br>Sheet no | |
| ເຂດປ່າຜະລິດ<br>PFA | | ຄຸ້ມ<br>Compartmen t | |
| ເຂດຄຸ້ມຄອງ<br>FMA | | ແລວແມ່<br>Baseline | |
| ເຂດຄຸ້ມຄອງຍ່ອຍ<br>SFMA | | ເບີລົດ<br>Truck no. | |

| ລ.ດ<br>S.N | ແລວປົກ<br>Strip line | Logs transported<br>ເບີຕົ້ນ<br>Tree No | ເບີທ່ອນ<br>Log No | ລວງຍາວ<br>Length (m) | ຊະນິດພັນ<br>Species |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| 4 | | | | | |
| 5 | | | | | |
| 6 | | | | | |
| 7 | | | | | |
| Total number of logs | | | | | |

ພະນັກງານຮັບຜິດຊອບສະໜາມ 1/ຜູ້ສົ່ງ ________

ຄົນຂັບລົດ ________

ພະນັກງານຮັບຜິດຊອບສະໜາມ 2/ ຜູ້ຮັບ

### ໃບນຳສົ່ງ/Transportation slip

| | | | |
|---|---|---|---|
| ວັນທີ<br>Date | | ໃບທີ<br>Sheet no | |
| ເຂດປ່າຜະລິດ<br>PFA | | ຄຸ້ມ<br>Compartment | |
| ເຂດຄຸ້ມຄອງ<br>FMA | | ແລວແມ່<br>Baseline | |
| ເຂດຄຸ້ມຄອງຍ່ອຍ<br>SFMA | | ເບີລົດ<br>Truck no. | |

| ລ. ດ<br>S.N | ແລວປົກ<br>Strip line | Logs transported<br>ເບີຕົ້ນ<br>Tree No | ເບີທ່ອນ<br>Log No | ລວງຍາວ<br>Length (m) | ຊະນິດພັນ<br>Species |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| 4 | | | | | |
| 5 | | | | | |
| 6 | | | | | |
| 7 | | | | | |
| Total number of logs | | | | | |

ພະນັກງານຮັບຜິດຊອບສະໜາມ 1/ຜູ້ສົ່ງ ________

ຄົນຂັບລົດ ________

ພະນັກງານຮັບຜິດຊອບສະໜາມ 2/ ຜູ້ຮັບ ________

### ໃບນຳສົ່ງ/Transportation slip

| | | | |
|---|---|---|---|
| ວັນທີ<br>Date | | ໃບທີ<br>Sheet no | |
| ເຂດປ່າຜະລິດ<br>PFA | | ຄຸ້ມ<br>Compartment | |
| ເຂດຄຸ້ມຄອງ<br>FMA | | ແລວແມ່<br>Baseline | |
| ເຂດຄຸ້ມຄອງຍ່ອຍ<br>SFMA | | ເບີລົດ<br>Truck no. | |

| ລ. ດ<br>S.N | ແລວປົກ<br>Strip line | ເບີຕົ້ນ<br>Tree No | Logs transported<br>ເບີທ່ອນ<br>Log No | ລວງຍາວ<br>Length (m) | ຊະນິດພັນ<br>Species |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| 4 | | | | | |
| 5 | | | | | |
| 6 | | | | | |
| 7 | | | | | |
| Total number of logs | | | | | |

ພະນັກງານຮັບຜິດຊອບສະໜາມ 1/ຜູ້ສົ່ງ ________

ຄົນຂັບລົດ ________

ພະນັກງານຮັບຜິດຊອບສະໜາມ 2/ ຜູ້ຮັບ ________

แบบฟอม 3: ບັນຊີໄມ້ເຂົ້າສະໜາມ II/Recording form for log arrival at Landing II

| ລ.ດ | ຊະນິດພັນ | ໜ້າຕັດ ສະເລ່ຍ (cm) | ລວງຍາວ (cm) | ບໍລິມາດ (m3) | ວັນທີຮັບເຂົ້າ | ນຳເບີລິດ | ທີ່ມາຂອງໄມ້ | ໝາຍເຫດ |
|---|---|---|---|---|---|---|---|---|
| 1 | ແຕ້ຄ່າ | 70.25 | 400 | 1.55 | 17/5/07 | 2273 | <u>01-2-02-01</u><br>1-02-03-1 | FSC |
| 2 | | | | | | | | |
| 3 | | | | | | | | |
| 4 | | | | | | | | |
| 5 | | | | | | | | |
| 6 | | | | | | | | |
| 7 | | | | | | | | |
| 8 | | | | | | | | |
| 9 | | | | | | | | |
| 10 | | | | | | | | |
| 11 | | | | | | | | |
| 12 | | | | | | | | |

ໝາຍເຫດ: (1)ແຫລ່ງທີ່ມາຂອງໄມ້ແມ່ນເບີທີ່ໝາຍໜ້າໄມ້ ເຊັ່ນ: 01-2-02-01

1-02-03-1

(2) ຢູ່ຖັນໝາຍເຫດແມ່ນສາຫລັບໝາຍ ໄມ້ທີໄດ້ຢັ້ງຢືນ ເຊັ່ນ: FSC

ວັນທີ:

ຫ້ອງການສົ່ງເສີມກະສິກຳປ່າໄມ້ເມືອງ

ວັນທີ:

ຜູ້ບັນທຶກ

ແບບຟອມ 4: ບັນຊີໄມ້ສະໜາມ II /Log list at Landing II

| | | | | | | | |
|---|---|---|---|---|---|---|---|
| ແຂວງ | | | ເຂດຄຸ້ມຄອງ | | ຊື່ສະໜາມໄມ້ | ຜູ້ສັນຍາຂຸດຄົ້ນ/Logging contractor | |
| PROVINCE | | | FMA | | Name of Landing II | ເລກທີອະນຸຍາດ/Logging license No | |
| ເຂດປ່າຜະລິດ | | | ເຂດຄຸ້ມຄອງຍ່ອຍ | | | ຈຳນວນໄມ້ທັງໝົດ/Total number of log | |
| PFA | | | SUB FMA | | | ປໍລິມາດ/Volume | |

| ລ.ດ<br>S.N | ຊະນິດພັນ<br>Species | ໜ້າຕັດ<br>D (cm) | ລວງຍາວ<br>L (m) | ປໍລິມາດ<br>Vol. (m3) | ຊັ້ນຄຸນະພາບ/grading<br>ກ | <br>ຂ | <br>ຄ | <br>ນປຜ | ໝາຍເຫດ<br>Remark | ແຫລ່ງທີ່ມາ<br>Log Nos. (origin) | ໝາຍເຫດ<br>Source |
|---|---|---|---|---|---|---|---|---|---|---|---|
| | | | | | | | | | | 01-2-02-01<br>1-02-03.1 | SW-FM/CoC-0017<br>FSC "ລ້ອມ" |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |
| | | | | | | | | | | | |

| | | |
|---|---|---|
| ວັນທີ: | ວັນທີ: | ວັນທີ: |
| ຂະແໜງປ່າໄມ້ | ຫ້ອງການສົ່ງເສີມກະສິກຳປ່າໄມ້ເມືອງ | ຜູ້ວັດແທກ |

ໝາຍເຫດ: (1) ນຳເບີໄມ້ທ່ອນແມ່ນນຳເບີທີ່ໄດ້ໝາຍຄືນຖ້ອນ (ນຳເບີທີ່ສາມາດກວດກາກັບຄືນໄດ້) 01-2-02-01

1-02-03-1

(2) ຢູ່ບ່ອນກັບແຫລ່ງທີ່ມາໃຫ້ໝາຍ FSC ສຳຫລັບໄມ້ທີ່ມາຈາກຄຸ້ມທີ່ໄດ້ຢັ້ງຢືນ (ໃຊ້ສຳຫລັບໄມ້ທີ່ໄດ້ຢັ້ງຢືນເທົ່ານັ້ນ)